ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື ເລກທີ 10 /ຈຂ.ອປ
ອັດຕະປື, ວັນທີ 21 ສິງຫາ 2017

# ຄຳສັ່ງແນະນຳ

**ເຖິງ:** ຫົວໜ້າພະແນກການ, ຫົວໜ້າກອງບັນຊາການ ປກສ ແຂວງ ແລະ ເຈົ້າເມືອງ 05 ຕົວເມືອງ.
**ເລື່ອງ:** ການແກ້ໄຂ ບັນຫາຂອງຊາວຕ່າງດ້າວ - ຊາວຕ່າງປະເທດ ທີ່ທຳມາຫາກິນ ແລະ ດຳເນີນທຸລະກິດ ບໍ່ຖືກຕ້ອງ ຢູ່ແຂວງອັດຕະປື.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ2015 ໝວດທີ IV, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ມະຕິຕົກລົງ ຂອງລັດຖະບານ ສະບັບເລກທີ 03/ລບ, ລົງວັນທີ 16 ມີນາ 2011 ກ່ຽວກັບທິດທາງ ແລະ ວິ ທີ ແກ້ໄຂບັນຫາຊາວຕ່າງປະເທດ ທີ່ທຳມາຫາກິນ ດ້ວຍການຄ້າຂາຍ ແລະ ອອກແຮງງານຮັບຈ້າງຢູ່ ສປປ ລາວ.
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງ ສະບັບເລກທີ 679/ຈຂ.ອປ, ລົງວັນທີ 18 ກໍລະກົດ 2016 ວ່າດ້ວຍການແຕ່ງຕັ້ງ ຄະນະນຳ ແລະ ຄະນະວິຊາການ ຮັບຜິດຊອບແກ້ໄຂ ບັນຫາຊາວຕ່າງປະເທດ ທີ່ທຳມາຫາກິນດ້ວຍການ ຄ້າຂາຍ ແລະ ການຊື້ - ຂາຍ ຄອບຄອງສິດນຳໃຊ້ທີ່ດິນ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

ໄລຍະຜ່ານມາ ກໍ່ຄືປະຈຸບັນ ສັງເກດເຫັນວ່າ: ຊາວຕ່າງດ້າວ, ຊາວຕ່າງປະເທດ ໄດ້ສວຍໂອກາດລັກຊື້ດິນ, ປຸກເຮືອນຢູ່ອາໃສ ແລະ ປະກອບອາຊີບດຳເນີນທຸລະກິດ ຢ່າງຊະຊາຍ ແບບລຳພັງໃຈ ຢູ່ຕາມສະຖານທີ່ຕ່າງໆ. ນອກຈາກນັ້ນ, ການຄຸ້ມຄອງຂອງເຈົ້າໜ້າທີ່ ແລະ ພະນັກງານກ່ຽວຂ້ອງຈຳນວນໜຶ່ງ ຍັງຖືເບົາຕໍ່ໜ້າທີ່ວິຊາສະເພາະທີ່ຕົນຮັບຜິດ ຊອບ, ຍິ່ງໄປກວ່ານັ້ນ ຍັງໃຫ້ຄວາມສະດວກ - ສ້າງໂອກາດ ແກ້ໄຂລັກສະນະຜ່ອນເບົາ ຕ່າງຝ່າຍມີນະໂຍບາຍພໍໃຜພໍລາວ ໂດຍບໍ່ໄດ້ປະຕິບັດຢ່າງເຂັ້ມງວດ ຕາມລະບຽບການ ແລະ ກົດໝາຍກຳນົດ. ບຸກຄົນກະທຳຜິດເຫຼົ່ານັ້ນ ຍິ່ງມີໂອ ກາດສ້າງວຽກເຮັດງານທຳ ໂດຍບໍ່ຖືກຕ້ອງໄປຕະຫຼອດ ທັງເປັນຕົ້ນເຫດ ຂອງການກໍ່ອາດສະຍາກຳ, ຂີ້ລັກງັດແງະ, ສວຍໂອກາດປຸ້ນຈີ້ລັກຊັບພົນລະເມືອງ ສ້າງຄວາມວຸ້ນວາຍສັບສົນໃຫ້ແກ່ສັງຄົມ.

ບັນຫາເຫຼົ່ານີ້ ແມ່ນລັກສະນະໜຶ່ງ ທີ່ເປັນໄພອັນຕະລາຍໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ, ບໍ່ມີຄວາມສະຫງົບ, ບໍ່ມີຄວາມເປັນລະບຽບຮຽບຮ້ອຍ, ເກີດມີການປຽບທຽບສັ່ງຊາການດຳເນີນທຸລະກິດ ລະຫວ່າງຄົນລາວ ກັບ ຕ່າງປະເທດ ເຊິ່ງເຮັດໃຫ້ຄົນລາວເກີດມີແນວຄິດອ່ອນແອ, ທໍ້ຖອຍ ເຖິງຄວາມດຸໝັ່ນຂະຫັຍນພຽນ, ສ້າງວຽກເຮັດງານທຳທີ່ເຂັ້ມແຂງໝັ້ນທ່ຽງ ຕາມນະໂຍບາຍຂອງພັກ - ລັດວາງອອກ.

ເພື່ອເປັນທິດທາງໃຫ້ແກ່ບັນດາຂະແໜງການກ່ຽວຂ້ອງ ແລະ ອຳນາດການປົກຄອງທຸກຂັ້ນ ແກ້ໄຂບັນຫາໃຫ້ມີຄວາມເອກະພາບກັນ ໃນການຄຸ້ມຄອງລັດ - ຄຸ້ມຄອງສັງຄົມ ໃຫ້ເຂົ້າສູ່ລະບຽບ, ກົດໝາຍຢ່າງເຂັ້ມງວດ, ແນໃສ່ໃຫ້ມີຄວາມສະຫງົບສຸກ, ມີຄວາມເປັນລະບຽບຮຽບຮ້ອຍ, ທັງເປັນການຊຸກຍູ້ສົ່ງເສີມອາຊີບ - ສ້າງໂອກາດ ໃຫ້ຄົນລາວມີກຳລັງແຮງດ້ານການພັດທະນາ ແນໃສ່ເສດຖະກິດຂອງແຂວງ ມີການຂະຫຍາຍຕົວໝັ້ນທ່ຽງດີຂຶ້ນເທື່ອລະກ້າວ ແລະ ຕິດພັນ ກັບການເກັບລາຍຮັບງົບປະມານແຫ່ງລັດ ໃຫ້ໄດ້ຕາມລະດັບຄາດໝາຍ.

**ເຈົ້າແຂວງອອກຄຳສັ່ງແນະນຳ ດັ່ງນີ້:**

1. ມອບໃຫ້ບັນດາຂະແໜງການກ່ຽວຂ້ອງ ທີ່ມີສ່ວນຮ່ວມໃນການຄຸ້ມຄອງຄົນຕ່າງປະເທດ ສືບຕໍ່ຈັດຕັ້ງປະຕິບັດຕາມຂໍ້ຕົກລົງ ສະບັບເລກທີ 679/ຈຂ.ອປ, ລົງວັນທີ 18 ກໍລະກົດ 2016 ວ່າດ້ວຍການແຕ່ງຕັ້ງຄະນະນຳ ແລະ ຄະນະວິຊາການຮັບຜິດຊອບ ແກ້ໄຂບັນຫາຊາວຕ່າງປະເທດ ທີ່ທຳມາຫາກິນ ດ້ວຍການຄ້າຂາຍ ແລະ ການຊື້ - ຂາຍ ຄອບຄອງສິດນຳໃຊ້ທີ່ດິນ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ. ເພື່ອເຄື່ອນໄຫວຊີ້ນຳ, ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງແຂງແຮງ ແລະ ແທດເໝາະກັບຕົວຈິງ ຕາມພາລະບົດບາດຂອງຕົນ ທີ່ມີການຊີ້ນຳດ້ານວິຊາການຈາກສາຍຕັ້ງບົນພື້ນຖານຄວາມເປັນເອກະພາບກັນ ດັ່ງນີ້:

**1.1. ການເຄື່ອນໄຫວທຸລະກິດຂອງຄົນຕ່າງປະເທດ:**

1.1.1. ສຳລັບຫົວໜ່ວຍທຸລະກິດ ທີ່ມີທຶນຮອນແຕ່ 1 ຕື້ກີບ ຂຶ້ນໄປ ແລະ ມີພື້ນຖານການຜະລິດ - ທຸລະກິດ ທີ່ໝັ້ນຄົງແມ່ນມອບໃຫ້ອົງການປົກຄອງເມືອງ ເປັນຜູ້ຮັບຜິດຊອບໂດຍກົງໃນການຄຸ້ມຄອງ, ຕິດຕາມ, ກວດກາ, ຈັດສັນບ່ອນຄ້າຂາຍເຊັ່ນ: ເຮັດດປັນບ່ອນຕະຫຼາດ ຫຼື ເຂດຮ້ານຄ້າຂາຍຂອງຊາວຕ່າງປະເທດ ແລະ ຢັ້ງຢືນ, ຮັບປະກັນ, ຊຸກຍູ້ໃຫ້ພວກເຂົາໄປຂຶ້ນທະບຽນວິສາຫະກິດນຳຂະແໜງອຸດສະຫະກຳ ແລະ ການຄ້າ, ໄປຂຶ້ນທະບຽນອາກອນ ແລະ ຂໍນຳໃຊ້ເລກປະຈຳຕົວຜູ້ເສຍອາກອນນຳຂະແໜງສ່ວຍສາອາ ກອນ, ໄປຂໍວີຊານຳຂະແໜງການຕ່າງປະເທດ, ໄປຂໍບັດອະນຸຍາດເຮັດວຽກນຳຂະແໜງແຮງງານ ແລະ ສະຫັວດດີການ - ສັງຄົມ ແລະ ໄປຂໍບັດອະນຸຍາດພັກເຊົາຢູ່ ສປປ ລາວ ນຳຂະແໜງປ້ອງກັນຄວາມສະ ຫງົບ ໃຫ້ຖືກຕ້ອງຄົບຖ້ວນຕາມລະບຽບການ, ພ້ອມທັງໃຫ້ເກັບພັນທະຕ່າງໆ ໃຫ້ຄົບຖ້ວນໃນການປະ ກອບເອກະສານຂອງເຂົາເຈົ້າ ເຊັ່ນດຽວກັບພົນລະເມືອງລາວ.

1.1.2. ສຳລັບຫົວໜ່ວຍທຸລະກິດ ຫຼື ຜູ້ທີ່ມີທຶນຮອນ 250 ກີບຕື້ ຂຶ້ນໄປ ແຕ່ບໍ່ຮອດ 1 ຕື້ກີບ ແມ່ນໃຫ້ເຮັດສັນຍາໄວ້ຢ່າງຮັດກຸມ. ກໍລະນີໄດ້ເຮັດສັນຍາແລ້ວກໍ່ໃຫ້ສືບຕໍ່ຕິດຕາມ ເພື່ອໃຫ້ເຂົາເຈົ້າເພີ່ມເງິນລົງທຶນ ໃຫ້ຮອດ 1 ຕື້ກີບ, ພາຍໃນກຳນົດ 1 ປີ ນັບແຕ່ມື້ເຮັດສັນຍາເປັນຕົ້ນໄປ ບົນພື້ນຖານການກວດກາ ແລະ ຢັ້ງຢືນຈາກຂະແໜງການກ່ຽວຂ້ອງ. ແຕ່ຖ້າຮອດ 1 ປີແລ້ວ ຍັງເພີ່ມທຶນບໍ່ໄດ້ ແມ່ນໃຫ້ຢຸດເຊົາກິດຈະການ ແລະ ໃຫ້ກັບຄືນປະເທດ.

1.1.3. ສຳລັບຫົວໜ່ວຍທຸລະກິດ ຫຼື ຜູ້ບໍ່ມີເງື່ອນໄຂທີ່ມີທຶນຮອນ ຕໍ່າກວ່າ 250 ລ້ານກີບ ແມ່ນບໍ່ອະນຸຍາດໃຫ້ເຄື່ອນໄຫວ ແລະ ສົ່ງກັບຄືນປະເທດ ພາຍໃນກຳນົດ 30 ວັນ.

**1.2. ການນຳໃຊ້ແຮງງານຕ່າງປະເທດ:**

1.2.1. ສຳລັບແຮງງານຕ່າງປະເທດ ທີ່ເຮັດວຽກຢູ່ບັນດາໂຄງການ, ຫົວໜ່ວຍທຸລະກິດ, ການຜະລິດ ແລະ ການບໍລິການຂອງທຸກພາກສ່ວນເສດຖະກິດຢູ່ພາຍໃນແຂວງ ທີ່ບໍ່ທັນໄດ້ຂຶ້ນທະບຽນ ຫຼື ຂຶ້ນກັບທະບຽນແລ້ວກໍ່ຕາມ ມອບໃຫ້ພະແນກແຮງງານ ແລະ ສະຫັວດດີການ - ສັງຄົມ ສົມທົບກັບຂະແໜງ ປກສ, ສ່ວຍສາ

ອາກອນ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນການລົງກວດກາສະຖານທີ່ກ່ຽວຂ້ອງໃນການລົງກວດກາສະຖານບ່ອນເຮັດວຽກອອກແຮງງານຕົວຈິງ ໂດຍສົມທົບກັບເຈົ້າຂອງທຸລະກິດ ດ້ວຍຄວາມຮັບຜິດຊອບສູງເພື່ອນຳເອົາບັນຊີຈຳນວນພົນຕົວຈິງ ມາແຈ້ງຂຶ້ນທະບຽນ, ອອກບັດອະນຸຍາດເຮັດວຽກ ແລະ ສັນຍາຈ້າງງານທີ່ຖືກຕ້ອງ ພ້ອມທັງແຈ້ງເສຍອາກອນລາຍໄດ້ກັບທີ່ໃນເວລານັ້ນເລີຍ.

1.2.2. ສຳລັບແຮງງານຕ່າງປະເທດຜູ້ທີ່ມີທັກສະສີມືດີ, ບໍ່ເປັນພະຍາດຕິດແປດ ແລະ ມີເງື່ອນໄຂແຮງງານຄົບຖ້ວນ ແມ່ນມອບໃຫ້ອຳນາດການປົກຄອງເມືອງ ແລະ ບ້ານນັ້ນຮັບຜິດຊອບໂດຍກົງໃນການຄຸ້ມຄອງ, ຕິດ ຕາມ, ກວດກາ ແລະ ຢັ້ງຢືນ, ຊຸກຍູ້ໃຫ້ພວກເຂົາໄປຂໍວີຊານຳຂະແໜງການຕ່າງປະເທດ, ໄປຂໍບັດອະນຸ ຍາດເຮັດວຽກນຳຂະແໜງແຮງງານແລະ ສະຫັວດດີການ - ສັງຄົມ ແລະ ໄປຂໍບັດອະນຸຍາດພັກເຊົານຳຂະແໜງ ປກສ ໃຫ້ຖືກຕ້ອງຄົບຖ້ວນຕາມລະບຽບການ ພ້ອມທັງໃຫ້ເກັບພັນທະຕ່າງໆ ຈາກພວກກ່ຽວໃຫ້ຄົບຖ້ວນ.

**1.3. ການຊື້ - ຂາຍ, ການຄອບຄອງສິດນຳໃຊ້ທີ່ດິນ ແລະ ເຮືອນ:**

ການຄອບຄອງສິດນຳໃຊ້ທີ່ດິນ ສຳລັບຄົນຕ່າງດ້າວ, ຄົນຕ່າງປະເທດ ແມ່ນຈະບໍ່ໄດ້ຮັບສິດຄືກັບຄົນລາວໝາຍວ່າ: ຈະອະນຸຍາດໃຫ້ເຊົ່າ ແລະ ສຳປະທານເທົ່ານັ້ນ ( ສ່ວນສິດ ແລະ ພັນທະຕ່າງໆ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2013, ໝວດທີ 2, ມາດຕາ 64, 65, 66, 67 ແລະ ມາດຕາ 88 ຕາມແຕ່ລະກໍລະນີຢ່າງເຂັ້ມງວດ ).

ຖ້າກວດກາພົບເຫັນການຊື້ - ຂາຍ, ການຄຸ້ມຄອງສິດນຳໃຊ້ທີ່ດິນ ແລະ ເຮືອນ ( ສິດນຳໃຊ້ໃນ ໃບຕາດິນ ຫຼື ໃບແຈ້ງອອກຊື່ຄົນລາວ ແຕ່ການຄອບຄອງນຳໃຊ້ແມ່ນຄົນຕ່າງປະເທດ ) ມອບໃຫ້ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການເງິນ ແລະ ອຳນາດການປົກຄອງເມືອງ ແລະ ບ້ານນັ້ນ ເອົາໃຈໃສ່ໃນການເກັບກຳຂໍ້ມູນ ແລະ ດຳເນີນການສືບສວນ, ສອບສວນໃຫ້ຮູ້ໄດ້ເຖິງທີ່ມາ ຂອງການນຳໃຊ້ສິດດັ່ງກ່າວຢ່າງຈະແຈ້ງ ແລະ ດຳເນີນການຕາມແຕ່ລະກໍລະນີ ດັ່ງນີ້:

- ກໍລະນີເຈົ້າຂອງກຳມະສິດຄົນລາວ ໄດ້ໃຫ້ຄົນຕ່າງປະເທດເຊົ່າ ເພື່ອເປັນທີ່ຢູ່ອາໄສ ຫຼື ດຳເນີນກິດຈະການໃດໜຶ່ງ ແມ່ນໃຫ້ຂະແໜງການເງິນເກັບພາສີທີ່ດິນ ແລະ ເກັບອາກອນລາຍໄດ້ ຈາກການໃຫ້ຄ່າເຊົ່າຕາມລະບຽບການ, ກົດໝາຍກຳນົດ.
- ກໍລະນີມີຂໍ້ມູນຊັດເຈນຮູ້ວ່າ ພວກກ່ຽວມີການລັກລອບຊື້ - ຂາຍ ສິດຄອບຄອງນຳໃຊ້ທີ່ດິນ ແລະ ເຮືອນແມ່ນໃຫ້ລົບລ້າງໃບຕາດິນ ຫຼື ໃບແຈ້ງທີ່ດິນຈຳນວນດັ່ງກ່າວ ແລະ ໂອນທີ່ດິນ - ເຮືອນ ມາເປັນກຳມະສິດຂອງລັດໃຫ້ຖືກຕ້ອງຕາມລະບຽບການ.

1.4. ຫ້າມບັນດາຂະແໜງການກ່ຽວຂ້ອງອອກໃບອະນຸຍາດດຳເນີນທຸລະກິດ( ຫົວໜ່ວຍໜຶ່ງປະກອບມີຫຼາຍສາຂາ ) ອອກວີຊາ, ອອກບັດອະນຸຍາດເຮັດວຽກ, ອອກບັດອະນຸຍາດພັກເຊົາ ແລະ ອອກໃບທະບຽນອາກອນໃຫ້ຫົວໜ່ວຍທຸລະກິດ ຫຼື ແຮງງານຕ່າງປະເທດ ໂດຍບໍ່ມີເງື່ອນໄຂ ຫຼືບໍ່ຖືກຕ້ອງຕາມລະບຽບ, ກົດໝາຍຢ່າງເດັດຂາດ.

1.5. ຫ້າມພະນັກງານ ແລະ ເຈົ້າໜ້າທີ່ຂອງລັດສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາປະໂຫຍດສ່ວນຕົວ, ຮັບສິນບົນຈາກຜູ້ລົງທຶນ, ຫົວໜ່ວຍແຮງງານແລະແຮງງານຕ່າງປະເທດຖ້າຜູ້ໃດລະເມີດໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພະນັກງານ - ລັດຖະກອນ ຫຼື ດຳເນີນຄະດີຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ ແລະ ທັນການ.

1.6. ກໍລະນີກວດກາພົບເຫັນ ຫົວໜ່ວຍທຸລະກິດ, ຫົວໜ່ວຍແຮງງານ ແລະ ແຮງງານຕ່າງປະເທດ ມີການລະເມີດຕໍ່ຄຳສັ່ງສະບັບນີ້ ແມ່ນມອບໃຫ້ຂະແໜງການທີ່ກ່ຽວຂ້ອງ ດຳເນີນຕາມມາດຕະການ ຕາມແຕ່ລະກໍລະນີຢ່າງເຂັ້ມງວດ ແລະ ເດັດຂາດ.

2. ມອບໃຫ້ພະແນກການເງິນແຂວງ ໃນນາມຄະນະຮັບຜິດຊອບ ຕາມຂໍ້ຕົກລົງ ສະບັບເລກທີ 679/ຈຂ.ອປ, ລົງວັນທີ 18 ກໍລະກົດ 2016 ເປັນໃຈກາງໃນການປະສານສົມທົບ ກັບຂະແໜງການກ່ຽວຂ້ອງ ແລະ ອໍານາດການປົກຄອງເມືອງ ໃນການຊີ້ນໍາ, ຕິດຕາມ, ກວດກາ ແລະ ລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໃຫ້ການນໍາຂອງແຂວງ ເປັນແຕ່ລະໄລຍະ ເພື່ອຊາບ ແລະ ມີທິດຊີ້ນໍາໃນການຈັດຕັ້ງປະຕິບັດ.

ດັ່ງນັ້ນ, ຈຶ່ງອອກຄໍາສັ່ງແນະນໍາສະບັບນີ້ ມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ເຈົ້າແຂວງ**

ບ່ອນນໍາສົ່ງ:

| | |
|---|---|
| - ຫ້ອງວ່າການແຂວງ | 01 ສະບັບ |
| - ທ່ານເຈົ້າເມືອງ ເມືອງລະ | 01 ສະບັບ |
| - ພະແນກການເງິນແຂວງ | 01 ສະບັບ |
| - ກອງບັນຊາການ ປກສ ແຂວງ | 01 ສະບັບ |
| - ພະແນກ ຊສສ ແຂວງ | 01 ສະບັບ |
| - ພະແນກອຸດສະຫະກໍາ ແລະ ການຄ້າແຂວງ | 01 ສະບັບ |
| - ພະແນກ ຊສ ແຂວງ | 01 ສະບັບ |
| - ພະແນກສ່ວຍສາອາກອນປະຈໍາແຂວງ | 01 ສະບັບ |
| - ເກັບຮັກສາໄວ້ | 01 ສະບັບ |

ປອ ນາມ ວິຍະເກດ